ຊຸດເຄື່ອງມື 1 – ເຄື່ອງໝາຍການຄ້າ ແລະ ການສ້າງແບຣນດ໌ດິຈິຕອນ

LAOS

ພາກ B: ຄູ່ມືແຫຼ່ງຂໍ້ມູນ / ເຄື່ອງມືແບບໂຕ້ຕອບ

ພາກທີ 1: ການຈົດທະບຽນ / ການຄຸ້ມຄອງເຄື່ອງໝາຍການຄ້າ

(1) ຄູ່ມືການຈົດທະບຽນ

ການຍື່ນຄຳຮ້ອງລະດັບຊາດ:

⚠️ **ໝາຍເຫດສຳຄັນ**

- ກົມຊັບສິນທາງປັນຍາ (DIP) ຂອງ ສປປ ລາວ ມີລະບົບຍື່ນຄຳຮ້ອງຊັບສິນທາງປັນຍາອອນໄລນ໌ ສຳລັບການຍື່ນຄຳຮ້ອງຂໍຈົດທະບຽນຊັບສິນທາງປັນຍາ ແລະ ການຍື່ນເອກະສານສ່ວນຫຼາຍແມ່ນຍັງເຮັດຜ່ານລະບົບນີ້, ຍົກເວັ້ນຄຳຮ້ອງທີ່ເປັນຂອງພົນລະເມືອງ/ບຸກຄົນ/ນິຕິບຸກຄົນລາວ. ລະບົບດັ່ງກ່າວຮຽກຮ້ອງໃຫ້ມີບັນຊີທີ່ລົງທະບຽນ ແລະ ລະຫັດຜ່ານເພື່ອເຂົ້າສູ່ລະບົບ.
- ຜູ້ຍື່ນຄຳຮ້ອງຊາວຕ່າງປະເທດທີ່ບໍ່ມີສຳນັກງານຢູ່ໃນ ສປປ ລາວຕ້ອງແຕ່ງຕັ້ງຕົວແທນໃນທ້ອງຖິ່ນ. ນອກຈາກນັ້ນ, ເນື່ອງຈາກເອກະສານທາງການ ແລະ ການຍື່ນເອກະສານສ່ວນຫຼາຍແມ່ນເປັນພາສາລາວ,ຜູ້ຍື່ນຄຳຮ້ອງຊາວຕ່າງປະເທດຈຶ່ງມັກຈະຕ້ອງການຄວາມຊ່ວຍເຫຼືອທາງດ້ານກົດໝາຍຈາກຕົວແທນທ້ອງຖິ່ນ.

ຂັ້ນຕອນການຈົດທະບຽນເຄື່ອງໝາຍການຄ້າ

1. ການກວດຄົ້ນເຄື່ອງໝາຍການຄ້າເບື້ອງຕົ້ນ

- **ຈຸດປະສົງ**: ເພື່ອຮັບປະກັນວ່າ ເຄື່ອງໝາຍການຄ້າຂອງທ່ານຍັງບໍ່ທັນໄດ້ຮັບການຈົດທະບຽນ ຫຼື ບໍ່ຄ້າຍຄືກັນເກີນໄປກັບເຄື່ອງໝາຍທີ່ມີຢູ່ແລ້ວ.
- **ແນະນຳ**: ເຖິງແມ່ນວ່າບໍ່ແມ່ນຂັ້ນຕອນທີ່ບັງຄັບ, ແຕ່ຂັ້ນຕອນນີ້ຊ່ວຍຫຼີກຫຼ່ຽງການຖືກປະຕິເສດ ແລະ ຊ່ວຍປະຢັດເວລາ.

2. ການກະກຽມ ແລະ ຍື່ນເອກະສານທີ່ຈຳເປັນ

- ໃບຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ
- ຕົວຢ່າງເຄື່ອງໝາຍການຄ້າ: ຮູບພາບ ຫຼື ການສະແດງຜົນທີ່ຊັດເຈນຂອງເຄື່ອງໝາຍ.
- ລາຍການສິນຄ້າ/ການບໍລິການ: ຈັດປະເພດພາຍໃຕ້ລະບົບ Nice Classification.
- ໃບມອບສິດ (POA): ຈຳເປັນຕ້ອງມີຖ້າຍື່ນຜ່ານຕົວແທນ; ພຽງແຕ່ສິ່ງສຳເນົາໃບມອບສິດທີ່ມີລາຍເຊັນ ແລະ ປະທັບຕາຜ່ານທາງອີເມວກໍພຽງພໍ. ຖ້າບໍລິສັດບໍ່ມີຕາປະທັບ ຈະຕ້ອງມີການຢັ້ງຢືນລາຍເຊັນ (notarization) ໃນໃບມອບສິດແທນ.
- ໃບຮັບເງິນຄ່າທຳນຽມ
- ວິທີການຍື່ນ:
    - ການຍື່ນແບບເຈ້ຍ: ຍື່ນເອກະສານໂດຍກົງຕໍ່ ກົມຊັບສິນທາງປັນຍາ(DIP); ຮັບພຽງແຕ່ສຳລັບພົນລະເມືອງ/ບຸກຄົນ/ນິຕິບຸກຄົນລາວທີ່ບໍ່ມີບັນຊີ E-filing ເທົ່ານັ້ນ.
    - ການຍື່ນທາງອອນໄລນ໌: ຜ່ານລະບົບ DIP Laos IP e-Filing Portal (ປັດຈຸບັນການຍື່ນທາງອອນໄລນ໌ຖືກນຳໃຊ້ຢ່າງກວ້າງຂວາງ ແລະ ເປັນຂໍ້ບັງຄັບ).

4. ການກວດກາທາງດ້ານຮູບແບບ

- ກົມຊັບສິນທາງປັນຍາDIP ກວດກາເບິ່ງວ່າຄຳຮ້ອງຄົບຖ້ວນຕາມເງື່ອນໄຂທາງດ້ານຮູບແບບທັງໝົດຫຼືບໍ່.

- ຖ້າ ກົມຊັບສິນທາງປັນຍາDIP ພົບວ່າຄຳຮ້ອງບໍ່ຄົບຖ້ວນ, ໃນອັນດັບທຳອິດຈະແຈ້ງໃຫ້ຜູ້ຍື່ນຄຳຮ້ອງຊາບຜ່ານຄຳອະທິບາຍທາງຄຳເວົ້າ ເພື່ອແກ້ໄຂ/ເຮັດໃຫ້ການຍື່ນຄຳຮ້ອງຄົບຖ້ວນ ແລະ ຍື່ນໃໝ່. ໃນກໍລະນີທີ່ບໍ່ໄດ້ຍື່ນໃໝ່, ກົມຊັບສິນທາງປັນຍາDIP ຈະອອກແຈ້ງການປະຕິເສດເບື້ອງຕົ້ນ, ເຊິ່ງສາມາດອຸທອນໄດ້ພາຍໃນກຳນົດເວລາ 10 ວັນລັດຖະການທີ່ບໍ່ສາມາດຕໍ່ເວລາອອກໄປໄດ້. ຫຼັງຈາກນັ້ນ ກົມຊັບສິນທາງປັນຍາ DIP ຈະອອກແຈ້ງການປະຕິເສດການຈົດທະບຽນເຄື່ອງໝາຍການຄ້າ ຖ້າການອຸທອນບໍ່ປະສົບຜົນສຳເລັດ.

5. ການປະກາດໃນຈົດໝາຍເຫດທາງລັດຖະການ

- ເມື່ອຄຳຮ້ອງຜ່ານການກວດກາທາງດ້ານຮູບແບບແລ້ວ, ເຄື່ອງໝາຍການຄ້າຈະຖືກປະກາດໃນຈົດໝາຍເຫດທາງລັດຖະການເພື່ອໃຫ້ມີການຄັດຄ້ານ.

6. ການກວດກາທາງດ້ານເນື້ອໃນ

- ກົມຊັບສິນທາງປັນຍາ DIP ປະເມີນຄວາມໂດດເດັ່ນ ແລະ ຄວາມຖືກຕ້ອງຕາມກົດໝາຍຂອງເຄື່ອງໝາຍການຄ້າ.
- ຖ້າຄຳຮ້ອງບໍ່ຜ່ານການກວດການີ້, ກົມຊັບສິນທາງປັນຍາ DIP ຈະອອກແຈ້ງການປະຕິເສດ ແລະ ຜູ້ຍື່ນຄຳຮ້ອງສາມາດຍື່ນອຸທອນໄດ້ພາຍໃນ 60 ວັນ ນັບຈາກວັນທີອອກແຈ້ງການ. ຫຼັງຈາກນັ້ນ ກົມຊັບສິນທາງປັນຍາ DIP ຈະອອກແຈ້ງການປະຕິເສດການຈົດທະບຽນເຄື່ອງໝາຍການຄ້າເຖິງຂັ້ນສຸດທ້າຍ ຖ້າການອຸທອນບໍ່ປະສົບຜົນສຳເລັດ.

7. ການຈົດທະບຽນ ແລະ ການອອກໃບຢັ້ງຢືນ

- ຖ້າບໍ່ມີການຄັດຄ້ານ ແລະ ເຄື່ອງໝາຍຜ່ານການກວດກາ, ກົມຊັບສິນທາງປັນຍາDIP ຈະອອກ ແລະ ສົ່ງໃບຢັ້ງຢືນການຈົດທະບຽນໃຫ້ແກ່ຜູ້ຍື່ນຄຳຮ້ອງ;
    - ປະກາດການຈົດທະບຽນເຄື່ອງໝາຍການຄ້າໃນຈົດໝາຍເຫດທາງລັດຖະການການຈົດທະບຽນຊັບສິນທາງປັນຍາ.
- ອາຍຸໃບຢັ້ງຢືນການຈົດທະບຽນ: 10 ປີນັບຈາກວັນທີຍື່ນຄຳຮ້ອງ, ແລະສາມາດຕໍ່ອາຍຸໄດ້ໂດຍບໍ່ຈຳກັດຈຳນວນເທື່ອ.

ການຍື່ນຄຳຮ້ອງສາກົນ (ສົນທິສັນຍາມາດຣິດ ຂອງ WIPO):

🔗 Madrid System: Filing International Trade mark Applications – The Process

(2) ລຶ້ງແບບຟອມ

ການຍື່ນຄຳຮ້ອງລະດັບຊາດ

🔗 ລະບົບອອນໄລນ໌ຂອງ ກົມຊັບສິນທາງປັນຍາ DIP ມີແບບຟອມຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າທາງການ (ເປັນພາສາລາວ) ໃຫ້ດາວໂຫຼດຢູ່ໃນພາກ “ດາວໂຫຼດແບບຟອມ” . ແບບຟອມນີ້ລວມທັງແບບຟອມສຳລັບການຂໍກວດຄົ້ນເຄື່ອງໝາຍການຄ້າ ແລະ ແບບຟອມສຳລັບການຂໍຈົດທະບຽນ.

ຄ່າທຳນຽມການຈົດທະບຽນ: ຄ່າທຳນຽມການຍື່ນຄຳຮ້ອງທາງການແມ່ນ 1,520,000 ກີບ ສຳລັບ 1 ຈຳພວກ ແລະ 800,000 ກີບ ສຳລັບແຕ່ລະຈຳພວກເພີ່ມເຕີມ.

ການຍື່ນຄຳຮ້ອງສາກົນ (ພິທີສັນຍາມາດຣິດ ຂອງ WIPO)

🔗 Madrid e-Filing: Apply for International Trade mark Protection Online

ສັນຍາທົ່ວໄປໃນການຄຸ້ມຄອງ ແລະ ການນຳໃຊ້ເຄື່ອງໝາຍການຄ້າໃນທາງການຄ້າ

ສັນຍາ ແມ່ນຂໍ້ຕົກລົງທີ່ມີຜົນຜູກມັດທາງກົດໝາຍ ເຊິ່ງກຳນົດສິດ ແລະ ພັນທະຂອງຄູ່ສັນຍາ ເມື່ອດຳເນີນການກ່ຽວກັບແບຣນຂອງທ່ານ. ໃນບໍລິບົດຂອງເຄື່ອງໝາຍການຄ້າ, ສັນຍາທົ່ວໄປປະກອບມີ

- ສັນຍາອະນຸຍາດນຳໃຊ້ສິດ(ອະນຸຍາດໃຫ້ຜູ້ອື່ນນຳໃຊ້ແບຣນຂອງທ່ານພາຍໃຕ້ເງື່ອນໄຂສະເພາະ). ການຈົດບັນທຶກສັນຍາອະນຸຍາດນຳໃຊ້ສິດທີ່ເປັນລາຍລັກອັກສອນຢູ່ DIP ແມ່ນຈຳເປັນ ເພື່ອຮັບປະກັນການບັງຄັບໃຊ້ໄດ້. ລະບົບອອນໄລນ໌ຂອງ DIP ມີແບບຟອມຄຳຮ້ອງຂໍຈົດທະບຽນສັນຍາອະນຸຍາດນຳໃຊ້ເຄື່ອງໝາຍການຄ້າ ຢູ່ໃນພາກ "Download Forms" :

  🔗 ຄໝ 6 - ໃບຄຳຮ້ອງ ຂໍອະນຸຍາດນຳໃຊ້ເຄື່ອງໝາຍການຄ້າ.pdf

- ສັນຍາຮັກສາຄວາມລັບ (NDAs) - ເພື່ອປົກປ້ອງແນວຄວາມຄິດກ່ຽວກັບແບຣນ ຫຼື ການອອກແບບ ທີ່ແບ່ງປັນກັບອົງການ, ຜູ້ເຮັດວຽກອິດສະຫຼະ (freelancers) ຫຼື ຫຸ້ນສ່ວນ.
- ສັນຍາໂອນສິດ (ເພື່ອໂອນກຳມະສິດຂອງເຄື່ອງໝາຍການຄ້າ) - ລະບົບອອນໄລນ໌ຂອງ DIP ມີແບບຟອມຄຳຮ້ອງຂໍໂອນສິດເຄື່ອງໝາຍການຄ້າ ຢູ່ໃນພາກ "Download Forms" :

  🔗 ຄໝ 7 - ໃບຄຳຮ້ອງ ຂໍໂອນສິດເຄື່ອງໝາຍການຄ້າ.pdf

- ສັນຍາການສ້າງແບຣນຮ່ວມກັນ ຫຼື ສັນຍາຮ່ວມມື (ເພື່ອກຳນົດວິທີການນຳໃຊ້ສອງແບຣນຮ່ວມກັນ).

ເອກະສານເຫຼົ່ານີ້ຊ່ວຍປົກປ້ອງມູນຄ່າແບຣນຂອງທ່ານ, ປ້ອງກັນການນຳໃຊ້ໃນທາງທີ່ຜິດ ແລະ ເຮັດໃຫ້ຂໍ້ຕົກລົງທາງການຄ້າຈະແຈ້ງ. ເນື່ອງຈາກເຄື່ອງໝາຍການຄ້າເປັນຊັບສິນທາງທຸລະກິດທີ່ມີມູນຄ່າ, **ສັນຍາຄວນໄດ້ຮັບການຮ່າງຢ່າງລະມັດລະວັງໂດຍທະນາຍຄວາມຊັບສິນທາງປັນຍາ** ເພື່ອຮັບປະກັນການບັງຄັບໃຊ້ໄດ້ ແລະ ການຄຸ້ມຄອງທີ່ເໝາະສົມ.

ມຸມມອງໂດຍຫຍໍ້

ປະເພດສັນຍາ	ຈຸດປະສົງ	ຂໍ້ກຳນົດທີ່ສຳຄັນທີ່ຄວນລະບຸ
ສັນຍາອະນຸຍາດນຳໃຊ້ເຄື່ອງໝາຍການຄ້າ	ອະນຸຍາດໃຫ້ຝ່າຍອື່ນນຳໃຊ້ເຄື່ອງໝາຍການຄ້າຂອງທ່ານພາຍໃຕ້ເງື່ອນໄຂທີ່ຕົກລົງກັນ	▪ ຂອບເຂດການນຳໃຊ້ ▪ ເຂດແຄ້ວ/ອານາເຂດ, ໄລຍະເວລາ ▪ ຄ່າສິດ ▪ ການຄວບຄຸມຄຸນນະພາບ
ສັນຍາການຮັກສາຄວາມລັບ (NDA)	ປົກປ້ອງຂໍ້ມູນຄວາມລັບຂອງແບຣນທີ່ແບ່ງປັນກັບນັກອອກແບບ, ອົງການ ຫຼື ຫຸ້ນສ່ວນ	▪ ນິຍາມຂອງຂໍ້ມູນຄວາມລັບ ▪ ພັນທະ ▪ ໄລຍະເວລາ ▪ ບົດລົງໂທດສຳລັບການລະເມີດ
ສັນຍາການໂອນສິດເຄື່ອງໝາຍການຄ້າ	ໂອນກຳມະສິດຂອງເຄື່ອງໝາຍການຄ້າໄປໃຫ້ອີກຝ່າຍໜຶ່ງ	▪ ລາຍລະອຽດຂອງການໂອນ ▪ ຄ່າຕອບແທນ/ການຊຳລະ, ການຮັບປະກັນ ▪ ການປັບປຸງຂໍ້ມູນການຈົດທະບຽນ
ສັນຍາການສ້າງແບຣນຮ່ວມກັນ / ການຮ່ວມມື	ກຳນົດກົດລະບຽບສຳລັບການນຳໃຊ້ສອງແບຣນຮ່ວມກັນໃນແຄມເປນ ຫຼື ຜະລິດຕະພັນ	▪ ການຈັດວາງໂລໂກ້ ▪ ສິດໃນການອະນຸມັດ ▪ ການແບ່ງປັນລາຍໄດ້

		▪ ການຍົກເລີກສັນຍາ
ສັນຍາການຈຳໜ່າຍ / ຕົວແທນຈຳໜ່າຍ	ອະນຸຍາດໃຫ້ຕົວແທນຈຳໜ່າຍຂາຍ ຜະລິດຕະພັນພາຍໃຕ້ແບຣນຂອງທ່ານ	▪ ການກຳນົດລາຄາ ▪ ເຂດແຄ້ວ/ອານາເຂດ ▪ ການນຳໃຊ້ເຄື່ອງໝາຍການຄ້າ ▪ ພັນທະດ້ານການຕະຫຼາດ

📌 ***ຂໍ້ຄວນຈື່:*** *ສັນຍາເຫຼົ່ານີ້ຊ່ວຍປົກປ້ອງເຄື່ອງໝາຍການຄ້າຂອງທ່ານໃນຖານະເປັນຊັບສິນທາງທຸລະກິດ ແລະ ຊ່ວຍຫຼີກລ່ຽງຂໍ້ຂັດແຍ່ງທີ່ມີຄ່າໃຊ້ຈ່າຍສູງ. ເອກະສານເຫຼົ່ານີ້ຄວນ**ໄດ້ຮັບການຮ່າງ ຫຼື ກວດສອບໂດຍທະນາຍຄວາມດ້ານຊັບສິນທາງປັນຍາ** ເພື່ອຮັບປະກັນການບັງຄັບໃຊ້ໄດ້ໃນ ສປປ ລາວ ແລະ ໃນລະດັບສາກົນ.*

(3) ລາຍການກວດສອບແບຣນ

ຖາມ: ຂ້ອຍເປັນເຈົ້າຂອງ ຫຼື ຕ້ອງການປົກປ້ອງຊັບສິນແບຣນດິຈິຕອນໃດແດ່?

✅ ໃຊ້ລາຍການກວດສອບນີ້:

- ໂລໂກ້ຫຼັກ ແລະ ຮູບແບບອື່ນໆ
- ອະລິເດັດ ຫຼື ຄຳຂວັນ
- ຊື່ຜະລິດຕະພັນ ຫຼື ຊື່ແບຣນ
- ຊື່ໂດເມນເວັບໄຊ
- ຊື່ບັນຊີສື່ສັງຄົມອອນໄລນ໌ (IG, FB ແລະອື່ນໆ)
- ຊື່ຮ້ານຄ້າອອນໄລນ໌ໃນແພລດຟອມອີຄອມເມີຊ
- ແຮັດແທັກຂອງແບຣນ
- ການຫຸ້ມຫໍ່ / ສະຫຼາກ

(4) ປະມວນຄຳສັບທີ່ກົດເຂົ້າເບິ່ງໄດ້

🔗 ປະມວນຄຳສັບເຄື່ອງໝາຍການຄ້າ

ຄຳສັບກ່ຽວກັບເຄື່ອງໝາຍການຄ້າ ຢູ່ ສປປ ລາວ.pdf

🔗 ປະມວນຄຳສັບກ່ຽວກັບການໂອນສິດ ແລະ ການອະນຸຍາດນຳໃຊ້ເຄື່ອງໝາຍການຄ້າ

ຄຳສັບກ່ຽວກັບການໂອນສິດ ແລະ ການອະນຸຍາດໃຫ້ໃຊ້ເຄື່ອງໝາຍການຄ້າ.pdf

(5) ຄູ່ມືຫຍໍ້ສຳລັບການປົກປ້ອງແບຣນອອນໄລນ໌

ປົກປ້ອງຕົວຕົນດິຈິຕອນຂອງທ່ານໂດຍການ:

- 🛡️ ຈັບຈອງຊື່ໂດເມນກັບຜູ້ໃຫ້ບໍລິການຈົດທະບຽນທີ່ເຊື່ອຖືໄດ້ (GoDaddy, Namecheap, Exabytes)
- 📱 ຈັບຈອງຊື່ບັນຊີສື່ສັງຄົມໃຫ້ສອດຄ່ອງກັນ (IG, Facebook, etc.)
- 🗂️ ຈັດເຮັດບັນທຶກຊັບສິນແບຣນ
- 🔍 ຕິດຕາມກວດກາການນຳໃຊ້ໃນທາງທີ່ຜິດໃນແພລດຟອມຕ່າງໆ (ເຊັ່ນ: Facebook Marketplace, Instagram, Wowbuy, Buylao)
- ⚠️ ຍື່ນແຈ້ງການໃຫ້ເລີບເນື້ອຫາອອກ ຫຼື ຍື່ນຄຳຮ້ອງທຸກດ້ານການບັງຄັບໃຊ້ເມື່ອຈຳເປັນ
- 📸 ບັນທຶກຮູບພາບໜ້າຈໍ ເພື່ອພິສູດການນຳໃຊ້ແບຣນຢ່າງຕໍ່ເນື່ອງ (ສຳລັບການບັງຄັບໃຊ້ກົດໝາຍ ຫຼື ການຕໍ່ອາຍຸ)

ພາກທີ 2: ການບັງຄັບໃຊ້ກົດໝາຍ

(1) ແບບຟອມການແຈ້ງລຶບເນື້ອຫາ ແລະ ລິ້ງໂດຍກົງຂອງແພລດຟອມ:

Facebook (ບໍລິສັດ Meta):

a. ***ແບບຟອມລາຍງານການລະເມີດເຄື່ອງໝາຍການຄ້າໃນ Facebook:***
https://www.facebook.com/help/contact/230197320740525

b. ***ແບບຟອມລາຍງານການລະເມີດລິຂະສິດໃນ Facebook:***
https://www.facebook.com/help/contact/634636770043106
(ໝາຍເຫດ: ເຖິງແມ່ນວ່າເອກະສານສະບັບນີ້ຈະເນັ້ນໃສ່ເຄື່ອງໝາຍການຄ້າ, ແຕ່ລິຂະສິດກໍຖືກລວມໄວ້ນຳ ເນື່ອງຈາກມັກຈະຖືກລາຍງານຜ່ານຂັ້ນຕອນທີ່ຄ້າຍຄືກັນ ແລະ ທັງສອງຢ່າງລ້ວນເປັນຊັບສິນທາງປັນຍາ.)

Instagram (ບໍລິສັດ Meta):

a. ***ແບບຟອມລາຍງານການລະເມີດເຄື່ອງໝາຍການຄ້າໃນ Instagram:***
https://help.instagram.com/contact/230197320740525

b. ***ແບບຟອມລາຍງານການລະເມີດລິຂະສິດໃນ Instagram:***
https://help.instagram.com/454951664593304
(ເຊັ່ນດຽວກັນ, ໄດ້ລວມເອົາລິຂະສິດໄວ້ນຳເນື່ອງຈາກມີຄວາມກ່ຽວຂ້ອງ.)

c. ***ສູນຊ່ວຍເຫຼືອຂອງ Instagram – ຊັບສິນທາງປັນຍາ:***
https://help.instagram.com/intellectualproperty
ໜ້ານີ້ສະໜອງພາບລວມ ແລະ ລິ້ງໄປຫາແບບຟອມທີ່ກ່ຽວຂ້ອງ. ພວກເຮົາແນະນຳໃຫ້ເຂົ້າເຖິງຂໍ້ມູນເຫຼົ່ານີ້ຜ່ານສູນຊ່ວຍເຫຼືອຢ່າງເປັນທາງການຂອງແຕ່ລະແພລດຟອມສະເໝີເພື່ອຮັບປະກັນວ່າທ່ານໄດ້ຮັບລິ້ງ ແລະ ຂໍ້ມູນທີ່ເປັນປັດຈຸບັນທີ່ສຸດ.

Facebook (Meta) - ແບບຟອມລາຍງານການລະເມີດເຄື່ອງໝາຍການຄ້າ

Facebook ໃຊ້ແບບຟອມອອນໄລນ໌ໂດຍກົງສຳລັບການລາຍງານການລະເມີດເຄື່ອງໝາຍການຄ້າ I.

ລິ້ງເຂົ້າເຖິງ: https://www.facebook.com/help/contact/230197320740525

ພາກສ່ວນ ແລະ ຂໍ້ມູນສຳຄັນທີ່ຖືກຮ້ອງຂໍ:

- ຂ້ອຍພົບເນື້ອຫາທີ່ຂ້ອຍເຊື່ອວ່າລະເມີດເຄື່ອງໝາຍການຄ້າຂອງຂ້ອຍ (ເຈົ້າເລືອກຕົວເລືອກນີ້)
- ເຈົ້າແມ່ນເຈົ້າຂອງສິດ ຫຼື ຕົວແທນທີ່ໄດ້ຮັບອະນຸຍາດບໍ? (ເລືອກ “ຂ້ອຍ ຫຼື ອົງການຂອງຂ້ອຍ” ຫຼື “ລູກຄ້າຂອງຂ້ອຍ”)
- ຂໍ້ມູນການຕິດຕໍ່:
    - ຊື່ແທ້ເຕັມຕາມກົດໝາຍຂອງທ່ານ
    - ຕຳແໜ່ງ / ໜ້າທີ່ໃນວົງການຂອງທ່ານ (ເຊັ່ນ: ເຈົ້າຂອງ, ທີ່ປຶກສາດ້ານກົດໝາຍ ແລະອື່ນໆ)
    - ອີເມວ (ພິຈາລະນາໃຊ້ອີເມວທຸລະກິດທົ່ວໄປ)
    - ທີ່ຢູ່ໄປສະນີ
    - ເບີໂທລະສັບ
    - ຊື່ຂອງເຈົ້າຂອງສິດ (ບຸກຄົນ ຫຼື ອົງການຈັດຕັ້ງ)
    - ລິ້ງເຊື່ອມຕໍ່ໄປຫາຕົວຕົນອອນໄລນ໌ຢ່າງເປັນທາງການຂອງເຈົ້າຂອງສິດ (ເຊັ່ນ ເວັບໄຊ ຫຼື ໜ້າສື່ສັງຄົມທາງການ)

- ຂໍ້ມູນເຄື່ອງໝາຍການຄ້າ:
    - ຊື່ຂອງເຄື່ອງໝາຍການຄ້າ
    - ປະເທດ / ເຂດເຂດພື້ນທີ່ທີ່ຈົດທະບຽນ
    - ເລກທີຈົດທະບຽນເຄື່ອງໝາຍການຄ້
    - ປະເພດຂອງສິນຄ້າ ແລະ/ຫຼື ການບໍລິການທີ່ຢູ່ໃນຂອບເຂດການຄຸ້ມຄອງຂອງເຄື່ອງໝາຍການຄ້າ
    - URL ໄປຫາຂໍ້ມູນການຈົດທະບຽນເຄື່ອງໝາຍການຄ້າ (ຖ້າມີເປີດເຜີຍອອນໄລນ໌
    - ແນບສຳເນົາເອກະສານການຈົດທະບຽນ (ເຊັ່ນ ອັບໂຫຼດ PDF ຂອງໃບຢັ້ງຢືນ)
- ເນື້ອຫາທີ່ທ່ານຕ້ອງການລາຍງານ:
    - ປະເພດຂອງເນື້ອຫາ: ຮູບພາບ, ວິດີໂອ ຫຼື ໂພສ; ເພຈ/ໂປຣໄຟລ໌; ໂຄສະນາ; ກຸ່ມ; ກິດຈະກຳ;ອື່ນໆ
    - URL ໂດຍກົງຂອງເນື້ອຫາທີ່ລະເມີດ (ສຳຄັນຫຼາຍສຳລັບແພລດຟອມ Meta): ທ່ານຈຳເປັນຕ້ອງມີ URL ທີ່ແນ່ນອນສຳລັບແຕ່ລະເນື້ອຫາ. ສຳລັບໂພສ, ໃຫ້ກົດທີ່ວັນທີ/ເວລາເພື່ອເອົາລິ້ງໂດຍກົງ
    - ກະລຸນາອະທິບາຍວ່າເນື້ອຫານີ້ລະເມີດເຄື່ອງໝາຍການຄ້າຂອງທ່ານແນວໃດ: ຊ່ອງໃຫ້ຂຽນຄຳອະທິບາຍລາຍລະອຽດຂອງທ່ານ.

- ຄຳຢືນຢັນ:
    - ທ່ານຈະຕ້ອງຢືນຢັນຂໍ້ຄວາມປະເພດນີ້ ເຊັ່ນ: "ຂ້ອຍມີຄວາມເຊື່ອໂດຍສຸດຈະລິດວ່າ ການນຳໃຊ້ເຄື່ອງໝາຍການຄ້າໃນເນື້ອຫາທີ່ອະທິບາຍຂ້າງເທິງນັ້ນ ບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງເຄື່ອງໝາຍການຄ້າ, ຕົວແທນ ຫຼື ກົດໝາຍ." ແລະ "ຂໍ້ມູນໃນແຈ້ງການນີ້ແມ່ນຖືກຕ້ອງ ແລະ ພາຍໃຕ້ໂທດຂອງການແຈ້ງຄວາມເທັດ, ຂ້ອຍໄດ້ຮັບອຳນາດໃຫ້ດຳເນີນການໃນນາມຂອງເຈົ້າຂອງສິດຜູກຂາດທີ່ຖືກກ່າວຫາວ່າຖືກລະເມີດ."

Instagram (Meta) - ແບບຟອມລາຍງານການລະເມີດເຄື່ອງໝາຍການຄ້າ

ແບບຟອມລາຍງານການລະເມີດເຄື່ອງໝາຍການຄ້າຂອງ Instagram ໂດຍພື້ນຖານແລ້ວມີເນື້ອໃນຄ້າຍຄືກັນກັບຂອງ Facebook, ເນື່ອງຈາກທັງສອງແມ່ນແພລດຟອມຂອງ Meta.

ລິ້ງເຂົ້າເຖິງ: https://help.instagram.com/contact/230197320740525

ພາກສ່ວນ ແລະ ຂໍ້ມູນສຳຄັນທີ່ຖືກຮ້ອງຂໍ: ຂໍ້ມູນຕ່າງໆ ແມ່ນຄ້າຍຄືກັນກັບແບບຟອມລາຍງານການລະເມີດເຄື່ອງໝາຍການຄ້າຂອງ Facebook ທີ່ລະບຸໄວ້ຂ້າງເທິງ.

ເຄັດລັບການປະຕິບັດທີ່ວ່ອງໄວ:

ຄຳແນະນຳທົ່ວໄປສຳລັບທຸກແພລດຟອມ:

- *ໃຊ້ຊ່ອງທາງທາງການສະເໝີ: ຍຶດຖືຕາມລິ້ງ ແລະ ຂັ້ນຕອນທີ່ສະໜອງໃຫ້ໂດຍສູນຊ່ວຍເຫຼືອຢ່າງເປັນທາງການ ຫຼື ລະບົບປ້ອງກັນຊັບສິນທາງປັນຍາຂອງແພລດຟອມ. ຖ້າແພລດຟອມບໍ່ມີຊ່ອງທາງສະເພາະເພື່ອຂໍໃຫ້ລຶບເນື້ອຫາ, ທ່ານສາມາດຂໍຄວາມຊ່ວຍເຫຼືອຜ່ານຊ່ອງທາງຕິດຕໍ່ ເຊັ່ນ ອີເມວບໍລິການລູກຄ້າ ຫຼື ເບີໂທລະສັບ. ຖ້າບໍ່ໄດ້ຜົນ, ໃຫ້ພິຈາລະນາທາງເລືອກການບັງຄັບໃຊ້ອື່ນໆ ເຊັ່ນ ການສົ່ງຈົດໝາຍເຕືອນໃຫ້ຢຸດການກະທຳ (cease-and-desist letters) ຫຼື ແຈ້ງຕໍ່ອົງການລັດທີ່ມີສິດອຳນາດ (DIP, ຕຳຫຼວດເສດຖະກິດ, ແລະອື່ນໆ)*

- *⚠ ໝາຍເຫດ: ລິ້ງ ແລະ ແບບຟອມຂອງແພລດຟອມ (ເຊັ່ນ: Facebook, Instagram) ອາດມີການປັບປຸງເປັນແຕ່ລະໄລຍະ. ໃຫ້ກວດເບິ່ງເວີຊັນຫຼ້າສຸດໃນເວັບໄຊທ໌ການຂອງແພລດຟອມສະເໝີ.*
- *ຮວບຮວມຫຼັກຖານໃຫ້ຄົບຖ້ວນ: ກ່ອນຈະລາຍງານ, ໃຫ້ເກັບກຳຫຼັກຖານທີ່ຈຳເປັນທັງໝົດ: ຮູບພາບໜ້າຈໍທີ່ຊັດເຈນ (ພ້ອມດ້ວຍ URL ແລະ ເວລາລະບຸ), ລາຍລະອຽດເຊັ່ນ ຊື່ຜູ້ຂາຍ, ແລະ ໃບຢັ້ງຢືນການຈົດທະບຽນຊັບສິນທາງປັນຍາຂອງທ່ານ.*
- *ໃຫ້ຊັດເຈນ ແລະ ຈະແຈ້ງ: ອະທິບາຍໃຫ້ຈະແຈ້ງວ່າຊັບສິນທາງປັນຍາຂອງທ່ານຖືກລະເມີດແນວໃດ. ຫຼີກລ່ຽງການໃຊ້ພາສາທີ່ໃຊ້ອາລົມ.*
- *ເກັບຮັກສາບັນທຶກ: ເກັບສຳເນົາຄຳຮ້ອງທຸກທີ່ທ່ານສົ່ງໄປ, ເລກທີລາຍງານ, ແລະ ການຕິດຕໍ່ສື່ສານໃດໆກັບແພລດຟອມ.*
- *ຄວາມອົດທົນແມ່ນກຸນແຈສຳຄັນ: ຂັ້ນຕອນການລຶບເນື້ອຫາອາດໃຊ້ເວລາ. ໃຫ້ຕິດຕາມຜົນຖ້າທ່ານບໍ່ໄດ້ຮັບການຕອບກັບພາຍໃນໄລຍະເວລາທີ່ສົມເຫດສົມຜົນ (ຕາມຄຳແນະນຳທີ່ລະບຸໄວ້, ຖ້າມີ).*

(2) ລາຍການກວດສອບສຳລັບການບັງຄັບໃຊ້ກົດໝາຍ: ການຄົ້ນຫາ → ການກວດພົບ → ການບັນທຶກ → ການຍື່ນຄຳຮ້ອງທຸກ → ການຕິດຕາມຜົນ

ລາຍການກວດສອບການບັງຄັບໃຊ້ກົດໝາຍສຳລັບ SMEs

1. ການຄົ້ນຫາ

- ແພລດຟອມທີ່ຕ້ອງກວດສອບ: Facebook, Instagram, Google, Wowbuy, Buylao, ເວັບໄຊອື່ນໆ, ແລະ ແພລດຟອມອື່ນທີ່ກ່ຽວຂ້ອງ.
- ຄວາມຖີ່: ___ (ເຊັ່ນ: ກວດທຸກອາທິດ, ຫຼື ທຸກສອງອາທິດ).
- ຜູ້ຮັບຜິດຊອບກວດສອບ: ___ (ໃສ່ຊື່/ຕຳແໜ່ງຂອງຜູ້ຮັບຜິດຊອບສະເພາະ).
- ເຄື່ອງມືທີ່ໃຊ້: Google Alerts, ຟັງຊັ່ນຄົ້ນຫາຄຳຫຼັກຢູ່ໃນແພລດຟອມ.

2. ການກວດພົບ

- ຊອກຫາ:
    - ລາຍການສິນຄ້າທີ່ໃຊ້ຊື່ແບຣນຫຼືໂລໂກ້ຂອງທ່ານໂດຍບໍ່ໄດ້ຮັບອະນຸຍາດ
    - ຮ້ານຄ້າອອນໄລນ໌ປອມທີ່ໃຊ້ຊື່ຂອງທ່ານ
    - ຮູບພາບ ຫຼື ຄຳອະທິບາຍທີ່ຄັດລອກມາຈາກຊ່ອງທາງທາງການຂອງທ່ານ
    - ໂຄສະນາທີ່ແອບອ້າງຂາຍສິນຄ້າຂອງທ່ານ
- ໝາຍລາຍການທີ່ນ່າສົງໄສທັນທີ ເມື່ອພົບເຫັນ.

3. ການບັນທຶກ

- ເກັບ URL ເຕັມຂອງລາຍການສິນຄ້າ ແລະ ຮ້ານຄ້າ.
- ຖ່າຍຮູບໜ້າຈໍຂອງລາຍການ (ຫົວຂໍ້, ຄຳອະທິບາຍ, ລາຄາ, ຮູບພາບ, ຊື່ຜູ້ຂາຍ).

- ບັນທຶກວັນທີ/ເວລາໃຫ້ປາກົດໃນຮູບໜ້າຈໍ.
- ເຮັດຮູບປຽບທຽບຄຽງຄູ່ກັບຮູບສິນຄ້າແທ້ຂອງທ່ານ.
- ຈັດເກັບຫຼັກຖານໄວ້ໃນໂຟນເດີ/ໄດຣຟ໌ຮ່ວມຂອງທີມ ພ້ອມຕັ້ງຊື່ຟາຍໃຫ້ຈະແຈ້ງ.

4. ການຍື່ນຄຳຮ້ອງທຸກ

- ກະກຽມ:
    - ໃບຢັ້ງຢືນເຄື່ອງໝາຍການຄ້າ ຫຼື ໃບຮັບການຍື່ນຄຳຮ້ອງ
    - ລາຍລະອຽດແບຣນ ແລະ ຫຼັກຖານວ່າເປັນເຈົ້າຂອງ
    - ຊຸດຫຼັກຖານ (ຮູບໜ້າຈໍ, URLs, ຮູບປຽບທຽບ)
- ຍື່ນຜ່ານຟອດທອລຊັບສິນທາງປັນຍາຂອງແພລດຟອມ (ຖ້າມີ). ສຳລັບ Facebook ແລະ Instagram, ໃຫ້ໃຊ້ແບບຟອມລາຍງານ IP ຂອງ Meta.
- ບັນທຶກວັນທີທີ່ຍື່ນ ແລະ ເລກອ້າງອີງຂອງການຮ້ອງທຸກ.

5. ການຕິດຕາມຜົນ

- ກວດສອບການຕອບກັບຂອງແພລດຟອມພາຍໃນ 3–7 ວັນລັດຖະການ.
- ຖ້າບໍ່ມີຄຳຕອບ:
    - ສົ່ງອີເມວຕິດຕາມ.
    - ປະສານຕໍ່ຜ່ານຊ່ອງທາງສະໜັບສະໜູນທຸລະກິດ.
- ຖ້າມີການລຶບເນື້ອຫາແລ້ວ:
    - ບັນທຶກການຢືນຢັນຈາກແພລດຟອມ.
    - ອັບເດດບັນທຶກການລະເມີດ.

ຂໍ້ມູນອ້າງອີງດ່ວນ: ວິທີການບັນທຶກການລະເມີດ (ເຊັ່ນ: ວັນທີ/ເວລາ, URLs, ສຳເນົາໜ້າເວັບທີ່ລະເມີດ)

1. ***ຖ່າຍຮູບໜ້າຈໍແບບເຕັມໜ້າ***

- ໜ້າສິນຄ້າ/ໜ້າເວັບທີ່ລະເມີດ
- ຊື່ຜູ້ຂາຍ ແລະ ໂລໂກ້
- ລາຄາ ແລະ ຄຳອະທິບາຍ
- ວັນທີ ແລະ ເວລາໃຫ້ມອງເຫັນໃນຮູບໜ້າຈໍ

ເຄັດລັບ: ໃຊ້ Lightshot, Snipping Tool, Full Page Screen Capture

2. **ບັນທຶກ URL**

- Cຄັດລອກລິ້ງເວັບໄຊແບບເຕັມ
- ວາງໃສ່ເອກະສານ Word/Excel

3. **ບັນທຶກວັນທີ ແລະ ເວລາ**

   - ບັນທຶກວັນທີ/ເວລາທີ່ພົບການລະເມີດ
   - ບັນທຶກວັນທີ/ເວລາທີ່ຖ່າຍຮູບໜ້າຈໍ

4. **ເກັບສຳເນົາໜ້າເວັບ**

   - ບັນທຶກໜ້າເວັບເປັນ HTML ຫຼື PDF
   - ບັນທຶກວິດີໂອການເບິ່ງໜ້າດັ່ງກ່າວ (ຖ້າຈຳເປັນ)

5. **ປຽບທຽບກັບແບຣນຂອງທ່ານເອງ**

   - ວາງຮູບຂອງແທ້ ແລະ ຂອງທີ່ລະເມີດຄຽງຄູ່ກັນ
   - ໄຮໄລ້ສ່ວນທີ່ຄື ຫຼື ອາດເຮັດໃຫ້ເກີດຄວາມສັບສົນ

6. **ຈັດລະບຽບຫຼັກຖານໃນໂຟນເດີ**

   - ຕັ້ງຊື່ໂຟນເດີ: “Infringement Evidence” (ຫຼັກຖານການລະເມີດ)
   - ໂຟນເດີຍ່ອຍ: Screenshots, Links, Proof, Correspondence
   - ຈັດເຮັດຕາຕະລາງເກັບຂໍ້ມູນ: ຊື່, ແພລດຟອມ, ລິ້ງ, ວັນທີ, ການດຳເນີນການ

ພາກທີ 3: ການນຳໃຊ້ໃນທາງການຄ້າ

(1) ແບບຟອມສັນຍາອະນຸຍາດນຳໃຊ້ເຄື່ອງໝາຍການຄ້າ

ຂໍ້ກຳນົດທີ່ສຳຄັນ

ຂໍ້ກຳນົດ	ສິ່ງທີ່ຄອບຄຸມ
ຂອບເຂດຂອງການອະນຸຍາດ	ອະທິບາຍວ່າຜູ້ໄດ້ຮັບອະນຸຍາດສາມາດນຳໃຊ້ຫຍັງໄດ້ບ້າງ (ເຊັ່ນ: ໂລໂກ້, ຊື່ແບຣນ, ການຫຸ້ມຫໍ່)
ອານາເຂດ	ບ່ອນທີ່ເຂົາເຈົ້າສາມາດນຳໃຊ້ໄດ້ (ເຊັ່ນ: ສະເພາະໃນລາວ, ອາຊຽນ, ທົ່ວໂລກ)
ໄລຍະເວລາ	ວັນທີເລີ່ມຕົ້ນ ແລະ ວັນທີສິ້ນສຸດຂອງການອະນຸຍາດ
ເງື່ອນໄຂຄ່າສິດ	ຮູບແບບການຈ່າຍຄ່າສິດ: ຄ່າທຳນຽມຕາຍຕົວ, ເປີເຊັນຂອງຍອດຂາຍ, ຍອດຮັບປະກັນຂັ້ນຕ່ຳ ຫຼື ຮູບແບບປະສົມ
ການຄວບຄຸມຄຸນນະພາບ	ຂໍ້ກຳນົດເພື່ອຮັກສາຄຸນນະພາບຂອງຜະລິດຕະພັນ/ການບໍລິການທີ່ນຳໃຊ້ແບຣນຂອງທ່ານ
ຂໍ້ກຳນົດການຍົກເລີກສັນຍາ	ເງື່ອນໄຂການອອກຈາກສັນຍາ (ເຊັ່ນ: ການລະເມີດສັນຍາ, ໝົດອາຍຸ, ການຕົກລົງເຫັນດີຮ່ວມກັນ)
ກຳມະສິດຊັບສິນທາງປັນຍາ	ກຳນົດໃຫ້ຊັດເຈນວ່າການເປັນເຈົ້າຂອງເຄື່ອງໝາຍການຄ້າຍັງຄົງເປັນຂອງຜູ້ໃຫ້ອະນຸຍາດ

(2) ລາຍການກວດສອບຄວາມພ້ອມໃນການສ້າງລາຍຮັບຈາກແບຣນ

📌 ເນື້ອໃນ PDF: ເຄື່ອງມືປະເມີນຕົນເອງສຳລັບ SMEs

"ແບຣນຂອງທ່ານພ້ອມແລ້ວບໍ ທີ່ຈະສ້າງລາຍຮັບຢ່າງຖືກກົດໝາຍ, ດ້ວຍຄວາມໝັ້ນໃຈ ແລະ ຢ່າງຍືນຍົງ?"

ຄຳຖາມ	ແມ່ນ	ບໍ່	ໝາຍເຫດ
ເຄື່ອງໝາຍການຄ້າຂອງທ່ານ ໄດ້ຈົດທະບຽນ (ຫຼື ຍື່ນຄຳ ຮ້ອງ) ແລ້ວບໍ?	☐	☐	
ໂລໂກ້/ຊື່ຂອງທ່ານຖືກນຳໃຊ້ ຢ່າງສະໝ່ຳເສມອ ຫຼື ສອດຄ່ອງກັນບໍ?	☐	☐	
ແບຣນຂອງທ່ານປາກົດຕົວໃນ ໂລກອອນໄລນ໌ແລ້ວບໍ?	☐	☐	
ທ່ານມີບັນທຶກຕິດຕາມຊັບສິນ ຂອງແບຣນແລ້ວບໍ?	☐	☐	
ຄົນອື່ນສາມາດຈຳແບຣນຂອງ ທ່ານໄດ້ງ່າຍບໍ?	☐	☐	
ທ່ານເຄີຍໄດ້ຮັບການຕິດຕໍ່ ສອບຖາມກ່ຽວກັບການ ອະນຸຍາດນຳໃຊ້ສິດ ຫຼື ແຟຣນ ໄຊບໍ?	☐	☐	

🔍 **ການໃຫ້ຄະແນນ:**

- 6 “ແມ່ນ” = ທ່ານພ້ອມແລ້ວທີ່ຈະສຳຫຼວດ/ສຶກສາໂອກາດໃນການອະນຸຍາດນຳໃຊ້ສິດ
- 4–5 “ແມ່ນ” = ທ່ານເກືອບພ້ອມແລ້ວ — ໃຫ້ປັບປຸງຍຸດທະສາດແບຣນຂອງທ່ານໃຫ້ແໜ້ນໜາຂຶ້ນ
- 0–3 “ແມ່ນ” = ໃຫ້ເນັ້ນໃສ່ການປົກປ້ອງແບຣນ ແລະ ການສ້າງຄວາມຊັດເຈນໃຫ້ແຂງແຮງກ່ອນ

ຂັ້ນຕອນຕໍ່ໄປທີ່ແນະນຳໃນໜ້າຜົນໄດ້ຮັບ:

ຖ້າຕອບ 6 “ແມ່ນ”:

- ເລີ່ມຕົ້ນຊອກຫາໂອກາດໃນການອະນຸຍາດນຳໃຊ້ສິດ; ກະກຽມແບບຟອມສັນຍາອະນຸຍາດນຳໃຊ້ເຄື່ອງໝາຍການຄ້າ.
- ສ້າງລາຍການກວດສອບການຄວບຄຸມຄຸນນະພາບສຳລັບຜູ້ໄດ້ຮັບອະນຸຍາດ.
- ພິຈາລະນາການຮ່ວມມືດ້ານແບຣນແລະ ການເຮັດແຟຣນໄຊ.

ຖ້າຕອບ 4–5 “ແມ່ນ”:

- ຈົດທະບຽນເຄື່ອງໝາຍການຄ້າທີ່ຍັງຂາດຢູ່.
- ປັບໃຫ້ການສ້າງແບຣນທັງອອນໄລນ໌ ແລະ ອອບລາຍນ໌ (offline) ໃຫ້ສອດຄ່ອງກັນ (ໂລໂກ້, ຊື່, ສີ).
- ສ້າງພອດໂຟລິໂອ (portfolio) ຊັບສິນແບຣນເພື່ອນຳໃຊ້ກັບຫຸ້ນສ່ວນ ຫຼື ຜູ້ຮ່ວມງານ..

ຖ້າຕອບ 0–3 “ແມ່ນ”:

- ຍື່ນຈົດທະບຽນເຄື່ອງໝາຍການຄ້າຫຼັກກ່ອນ.

- ສ້າງຄູ່ມືຮູບແບບແບຣນ.
- ສ້າງຕົວຕົນໃນສື່ສັງຄົມໃຫ້ແຂງແຮງກ່ອນຈະເຂົ້າສູ່ຂັ້ນຕອນ.

(3) ຄູ່ມື: ການເລືອກລະຫວ່າງ ການອະນຸຍາດນຳໃຊ້ສິດ, ການຂາຍແຟຣນໄຊ, ຫຼື ການເປັນຫຸ້ນສ່ວນດິຈິຕອນ

📌 *ເນື້ອໃນ PDF: ຕາຕະລາງປຽບທຽບ + ເຄັດລັບ*

ແບບຮູບ	ເໝາະສຳລັບ	ລະດັບການຄວບຄຸມ	ຄວາມສາມາດໃນການສ້າງລາຍຮັບ	ຄວາມຊັບຊ້ອນ
ການອະນຸຍາດນຳໃຊ້ສິດ	ສິນຄ້າຂອງທີ່ລະລຶກ, ອີເວັນ, ຫຼື ການຮ່ວມມືແບບຈຳກັດ	ປານກາງ	ປານກາງ	ຕ່ຳ–ປານກາງ
ການຂາຍແຟຣນໄຊ	ຮູບແບບທຸລະກິດທີ່ພິສູດແລ້ວວ່າສຳເລັດ, ທຸລະກິດບໍລິການ	ສູງ	ສູງ (ຂະຫຍາຍໂຕໄດ້)	ສູງ
ການເປັນຫຸ້ນສ່ວນດິຈິຕອນ	ອິນຟລູເອນເຊີ, ການສ້າງແບຣນຮ່ວມກັນ, ການເປີດໂຕອອນໄລນ໌	ຕ່ຳ–ປານກາງ	ປ່ຽນແປງໄດ້	ຕ່ຳ

ຂໍ້ພິຈາລະນາທີ່ສຳຄັນ:

- ທ່ານຕ້ອງການການຄວບຄຸມແບບເຕັມທີ່ບໍ (ແຟຣນໄຊ)?
- ທ່ານກຳລັງທົດສອບຕະຫຼາດໃໝ່ບໍ (ອະນຸຍາດນຳໃຊ້ສິດ)?
- ທ່ານຢາກເຕີບໂຕຕົວຕົນອອນໄລນ໌ໃຫ້ໄວບໍ (ການຮ່ວມມືດິຈິຕອນ)?

ຕົວຢ່າງເຄັດລັບ: "ຖ້າແບຣນຂອງທ່ານມີຮູບລັກສະນະສາຍຕາ (visuals) ທີ່ໂດດເດັ່ນ ແຕ່ຍັງບໍ່ມີຮ້ານຂາຍຍ່ອຍ, ການອະນຸຍາດນຳໃຊ້ສິດໃຫ້ກັບແບຣນສິນຄ້າຂອງທີ່ລະລຶກ ຫຼື ອິນຟລູເອນເຊີ ອາດຈະເປັນເສັ້ນທາງສ້າງລາຍຮັບທີ່ມີຕົ້ນທຶນຕ່ຳທີ່ສຸດສຳລັບທ່ານ."

